ສຳນັກງານ ຄຄຊ
ຮັບ ເລກທີ... 0086
ວັນທີ 22 JAN 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 01 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 22 ມັງກອນ 2018

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ທັນວາ ປີ 2017 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ທັນວາ 2017 ແລະ ທິດທາງແຜນການໃນເດືອນ ມັງກອນ 2018 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ພະຈິກ ແລະ ເດືອນ ທັນວາ 2017; ກອງປະຊຸມແນະນຳການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດປະຈຳປີ 2018; ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍສົນທິສັນຍາ ແລະ ສັນຍາສາກົນ; ກອງປະຊຸມຮ່ວມກັບຄະນະປະຈຳສະພາແຫ່ງຊາດ; ກອງປະຊຸມປຶກສາຫາລືວຽກງານອ່າງໜີ້ສາມແຈ; ກອງປະຊຸມວຽກງານທີ່ດິນທົ່ວປະເທດ; ກອງປະຊຸມສະພາບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກ; ກອງປະຊຸມລະດັບຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ +3 ຢູ່ປະເທດຍີ່ປຸ່ນ;
- ສຳເລັດການຈັດກອງປະຊຸມ ແລະ ພິທີຕ່າງໆ: ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ III ປະຈຳປີ 2017; ກອງປະຊຸມສະພາບໍລິຫານທະນາຄານນະໂຍບາຍ ຄັ້ງທີ II ປະຈຳປີ 2017; ກອງປະຊຸມເປີດກວ້າງເພື່ອທາບທາມຄຳເຫັນໃສ່ຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ທາງດ້ານການເງິນ; ກອງປະຊຸມຜ່ານຮ່າງແຜນສ້າງຄວາມເຂັ້ມແຂງວຽກງານປະຊາສຶກສາທາງດ້ານການເງິນແຫ່ງຊາດ; ກອງປະຊຸມປຶກສາຫາລືກ່ຽວກັບການລາຍງານຂໍ້ມູນເງິນຝາກຂອງກອງທຶນປົກປ້ອງຜູ້ຝາກເງິນ; ຈັດຕັ້ງພິທີເຊັນບົດບັນທຶກຄວາມເຂົ້າໃຈລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງ ສ.ເກົາຫຼີ; ຈັດຕັ້ງພິທີອວຍພອນເຊິ່ງກັນແລະກັນ ເນື່ອງໃນໂອກາດສົ່ງທ້າຍປີເກົ່າຕ້ອນຮັບປີໃໝ່ ຄສ 2018; ເຂົ້າຮ່ວມພິທີວາງພວງມາລາ ຢູ່ອານຸສາວະລີນັກຮົບນິລະນາມ ແລະ ວາງກະຕ່າດອກໄມ້ ຢູ່ຫໍພິພິທະພັນທ່ານປະທານ ໄກສອນ ພົມວິຫານ; ຈັດປະຖະກະຖາໃນຫົວຂໍ້: "ລະນຶກວັນສາກົນ ເພື່ອລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ";

- ສໍາເລັດການຈັດຝຶກອົບຮົມ ແລະ ສໍາມະນາໃນຫົວຂໍ້ຕ່າງໆ: ຈັດສໍາມະນາໃນຫົວຂໍ້: "ການວິເຄາະຖານະການເງິນ ຕາມຫຼັກການບາເຊວ 2" ແລະ ຫົວຂໍ້: "ການສະກັດກັ້ນ ແລະ ການສໍ້ລາດບັງຫຼວງ"; ຈັດຝຶກອົບຮົມວຽກງານກວດກາ;

- ສໍາເລັດການຕ້ອນຮັບແຂກສາກົນເຂົ້າພົບປະຄະນະນໍາ ທຫລ ມີ ທ່ານ ນ. Edna Villa ຮອງຫົວໜ້າກຸ່ມ SEAVG; ຄະນະປະເມີນຜົນເສດຖະກິດມະຫາພາກຂອງອົງການກອງທຶນການເງິນສາກົນ; ຜູ້ອໍານວຍການໃຫຍ່ (ຄົນໃໝ່) ຂອງທະນາຄານ ເອຊີລີດາ.

## III. ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

- ໃນເດືອນ 12/2017, ສະພາບເສດຖະກິດໂລກແມ່ນຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໄດ້ຮັບແຮງຍູ້ໜູນຂອງມູນຄ່າການສົ່ງອອກ ເປັນຕົ້ນ: ກຸ່ມປະເທດເສດຖະກິດທີ່ພັດທະນາແລ້ວ ຄາດວ່າຈະຂະຫຍາຍຕົວໃນລະດັບ 2,2% ເຊິ່ງປະກອບດ້ວຍບັນດາປະເທດ: ສ.ອາເມລິກາ 2,2%, ສະຫະພາບເອີຣົບ 2,1%, ຍີ່ປຸ່ນ 1,5%, ອັງກິດ 1,7% ແລະ ການາດາ 3,0%. ສໍາລັບກຸ່ມປະເທດເສດຖະກິດເກີດໃໝ່ ແລະ ກໍາລັງພັດທະນາ ຈະຂະຫຍາຍຕົວ 4,6% ໂດຍສະເພາະໃນຂົງເຂດອາຊີ ເຊັ່ນ: ສປ.ຈີນ, ອິນເດຍ ແລະ ອາຊຽນ +5 ຈະຂະຫຍາຍຕົວໃນລະດັບ 6,8%, 6,7% ແລະ 5,2% ຕາມລໍາດັບ ເນື່ອງຈາກໄດ້ຮັບແຮງຊຸກຍູ້ຈາກອຸປະສົງພາຍໃນປະເທດ ແລະ ຕະຫຼາດແຮງງານທີ່ຟື້ນຕົວດີຂຶ້ນຕໍ່ເນື່ອງ. ເຖິງຢ່າງໃດກໍ່ຕາມ, ອັດຕາເງິນເຟີ້ໃນປີ 2017 ຄາດວ່າຈະຢູ່ໃນລະດັບ 1,7% ສໍາລັບກຸ່ມປະເທດທີ່ພັດທະນາແລ້ວ ແລະ 4,2% ສໍາລັບກຸ່ມປະເທດເສດຖະກິດເກີດໃໝ່ ແລະ ກໍາລັງພັດທະນາ;

- ສໍາລັບອັດຕາແລກປ່ຽນ: ເງິນໂດລາອ່ອນຄ່າ 1,04% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີ ເຊິ່ງເຫັນໄດ້ຈາກຕົວເລກດຸນງົບປະມານຂອງເດືອນ 10/2017 ຂາດດຸນ 63,2 ຕື້ໂດລາສະຫະລັດ ຈາກຂາດດຸນ 45,8 ຕື້ໂດລາສະຫະລັດ ໃນເດືອນຜ່ານມາ; ຕົວເລກການສັ່ງຊື້ສິນຄ້າຄົງທົນ ຫຼຸດລົງ 1,20% ຂອງເດືອນ 10/2017 ຈາກເພີ່ມຂຶ້ນ 2,20% ໃນເດືອນຜ່ານມາ; ຈໍານວນປະຊາຊົນທີ່ຂໍສະຫວັດດີການເພີ່ມຂຶ້ນຢ່າງຕໍ່ເນື່ອງເປັນ 1,96 ລ້ານຄົນ ໃນອາທິດທີ 18/11/2017 ຈາກ 1,92 ລ້ານຄົນ ໃນອາທິດຜ່ານມາ;

- ສ່ວນລາຄານໍ້າມັນ ເພີ່ມຂຶ້ນ 5,37% ຈາກ 54,14 ໂດລາ/ບາເຣວ ມາເປັນ 57,05 ໂດລາ/ບາເຣວ ພາຍຫຼັງຄັງສໍາຮອງນໍ້າມັນດິບຂອງ ສ.ອາເມລິກາ ຫຼຸດລົງ 1,86 ລ້ານບາເຣວ ໃນອາທິດທີ 17/11/2017, ຈາກເພີ່ມຂຶ້ນ 1,85 ລ້ານບາເຣວ ໃນອາທິດຜ່ານມາ; ລາຄານໍ້າມັນຍັງໄດ້ຮັບຜົນກະທົບມາຈາກປະເທດເວເນຊູເອລ່າ ໄດ້ຫຼຸດກໍາລັງການຜະລິດລົງຕໍ່າກວ່າ 2 ລ້ານບາເຣວ/ວັນ ຊຶ່ງຢູ່ໃນລະດັບຕໍ່າທີ່ສຸດໃນຮອບ 28 ປີຜ່ານມາ ແລະ ທໍ່ສົ່ງນໍ້າມັນຈາກປະເທດການາດາຫາ ສ.ອາເມລິກາ ຖືກປິດເພື່ອປັບປຸງຢ່າງກະທັນຫັນພາຍຫຼັງພົບວ່າມີນໍ້າມັນຮົ່ວ. ໃນດ້ານລາຄາຄໍາ ຫຼຸດລົງ 0,32% ຈາກ 1.278,91 ໂດລາ/ອອນ ມາເປັນ 1.274,85 ໂດລາ/ອອນ ເນື່ອງຈາກນັກລົງທຶນໄດ້ເທຂາຍຄໍາ ແລະ ສັນຍາຊື້-ຂາຍຄໍາເພື່ອເກັງກໍາໄລ ໂດຍສະເພາະກອງທຶນ SPDR ໄດ້ເທຂາຍຄໍາ ແລະ ສັນຍາຊື້-ຂາຍຄໍາ ຈໍານວນ 5,30 ໂຕນ ເຮັດໃຫ້ປະລິມານຄໍາທີ່ກອງທຶນ SPDR ຖືຄອງແມ່ນ 842,81 ໂຕນ ໃນວັນທີ 07/12/2017 ຈາກ 848,11 ໂຕນ ໃນວັນທີ 01/12/2017.

### 2. ສະພາບເງິນຕາພາຍໃນ.

- ອັດຕາເງິນເຟີ້ປະຈໍາເດືອນ 12/2017 (ຕົວເລກຄາດຄະເນ) ຢູ່ໃນລະດັບ 0,33% ເພີ່ມຂຶ້ນຈາກ 0,23% ໃນເດືອນ 11/2017;

– ຖານເງິນຕາປະຈຳເດືອນ 12/2017 ເພີ່ມຂຶ້ນ 1.118,20 ຕື້ກີບ ຫຼື 3,02% ທຽບໃສ່ເດືອນ 11/2017, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 14,28%. ປະລິມານເງິນ M2 ເພີ່ມຂຶ້ນ 1.154,59 ຕື້ກີບ ຫຼື 1,48% ທຽບໃສ່ເດືອນ 11/2017 ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9.902,22 ຕື້ກີບ ຫຼື 14,32%;

– ອັດຕາແລກປ່ຽນທີ່ອລະບົບໃນເດືອນ 12/2017 ທຽບເດືອນ 11/2017 ໝັ້ນຄົງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກເງິນກີບແຂງຄ່າ 0,52% ທຽບເງິນໂດລາ ແຕ່ອ່ອນຄ່າ 0,64% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າ 0,17% ທຽບກັບເງິນໂດລາ ແຕ່ອ່ອນຄ່າ 8,22% ທຽບເງິນບາດ;

– ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 12/2017 (14/11-12/12/2017) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ຫຼຸດລົງ 4,64% ຖ້າທຽບໃສ່ເດືອນ 11/2017. ທທກ ຂາຍເງິນຕາຕ່າງປະເທດ ສຸດທິ 11,71 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຊື້ເງິນໂດລາສຸດທິ 53,59 ລ້ານໂດລາສະຫະລັດ, ແຕ່ຂາຍເງິນບາດສຸດທິ 1.327,36 ລ້ານບາດ ຫຼື 41,88 ລ້ານໂດລາສະຫະລັດທຽບເທົ່າ). ໃນນັ້ນ ທຫລ ໄດ້ດຸນດ່ຽງຂາຍເງິນຕາຕ່າງປະເທດໃຫ້ ທທກ ໂດຍຂາຍເງິນຕາຕ່າງປະເທດ ສຸດທິ 32,61 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍເງິນໂດລາສຸດທິ 29,70 ລ້ານໂດລາສະຫະລັດ ແລະ ຂາຍເງິນບາດສຸດທິ 92,23 ລ້ານບາດ ຫຼື 2,91 ລ້ານໂດລາສະຫະລັດທຽບເທົ່າ). ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 23,50 ລ້ານໂດລາສະຫະລັດທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາສະຫະລັດ 16,92 ລ້ານໂດລາສະຫະລັດ ແລະ ເງິນບາດ 208,50 ລ້ານບາດ ຫຼື 6,58 ລ້ານໂດລາສະຫະລັດ);

– ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານ ປະຈຳເດືອນ 12/2017 (14/11/2017-11/12/2017) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 111,18 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼເຂົ້າ ຈຳນວນ 555,01 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ຮັບຈາກການສົ່ງອອກສິນຄ້າ ຈຳນວນ 197,17 ລ້ານໂດລາສະຫະລັດ, ການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 125 ລ້ານໂດລາສະຫະລັດ ແລະ ການບໍລິການ ຈຳນວນ 96,98 ລ້ານໂດລາສະຫະລັດ, ສ່ວນກະແສເງິນໄຫຼອອກ ຈຳນວນ 666,19 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າຂອງບັນດາວິສາຫະກິດ ຈຳນວນ 372,45 ລ້ານໂດລາສະຫະລັດ, ຊຳລະຄ່າບໍລິການ ຈຳນວນ 163,14 ລ້ານໂດລາສະຫະລັດ.

3. ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ

– ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/12/2017 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 68.466,05 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 1,08%. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 14,69%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 1,71% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 46,37% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 0,54% ຊຶ່ງກວມເອົາ 53,63% ຂອງເງິນຝາກທັງໝົດ;

– ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 12/12/2017 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 65.531,08 ຕື້ກີບ ເພີ່ມຂຶ້ນ 0,07% ເມື່ອທຽບໃສ່ເດືອນຜ່ານມາ. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,60%. ສິນເຊື່ອເປັນເງິນກີບ ກວມເອົາ 49,70% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 50,30% ຂອງສິນເຊື່ອທັງໝົດ;

– ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 26.01 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 5,93%, ເກັບຕົ້ນທຶນໄດ້ 19.25 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 16,63% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 12/2017 ມີຈຳນວນ 3.180,45 ຕື້ກີບ ເທົ່າກັບ 95,35% ຂອງແຜນການ (3.328,31 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.117,18 ຕື້

ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 335,44 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 296,82 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 431,01 ຕື້ກີບ.

## 4. ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊໍາລະສະສາງ

ການຊໍາລະສະສາງດ້ວຍແຊັກຜ່ານສູນຊໍາລະສະສາງໃນເດືອນນີ້ ມີຈໍານວນ 4.105 ສະບັບ ຫຼຸດລົງ 2,07% ເປັນເງິນຈໍານວນ 1.658,25 ຕື້ກີບ ຫຼຸດລົງ 7,02% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈໍານວນ 186 ຄັ້ງ ຫຼຸດລົງ 9,26% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 869,28 ຕື້ກີບ ຫຼຸດລົງ 12,44% ເມື່ອທຽບໃສ່ເດືອນຜ່ານມາ; ສໍາລັບການໂອນເງິນຜ່ານລະບົບຊໍາລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/11-24/12/2017 ມີຈໍານວນ 15.550 ຄັ້ງ ລາຍລະອຽດມີດັ່ງນີ້:

– **ສະກຸນເງິນກີບ:** ມີການເຄື່ອນໄຫວ ຈໍານວນ 14.738 ຄັ້ງ ມີມູນຄ່າການໂອນ 4.230,98 ຕື້ກີບ ຫຼຸດລົງ 20,51% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 4.186 ຄັ້ງ. ໃນນັ້ນ ມີ 42 ພາກສ່ວນທີ່ເຮັດທຸລະກໍາ (ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);

– **ກະຊວງການເງິນ:** ມີການເຄື່ອນໄຫວ ຈໍານວນ 812 ຄັ້ງ ມີມູນຄ່າການໂອນ 542,86 ຕື້ກີບ ຫຼຸດລົງ 21,26%.

### 4.2 ການຊື້-ຂາຍພັນທະບັດ

– ໃນເດືອນ 12/2017 ພັນທະບັດກະຊວງການເງິນບ້ວງລະດົມທຶນ ຜ່ານ ທຫລ (ບ້ວງ ທຫລ ບໍ່ຄໍ້າປະກັນ) ມີການຈໍາໜ່າຍ 291 ຕື້ກີບ ຊຶ່ງປະກອບດ້ວຍ: ທະນາຄານພົງສະຫວັນ 10 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ 30 ຕື້ກີບ, ກອງທຶນປະກັນສັງຄົມ 5 ຕື້ກີບ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 246 ຕື້ກີບ ແລະ ໄດ້ໄຖ່ຖອນພັນທະບັດຄືນ ຈໍານວນ 276 ຕື້ກີບ ໃນນັ້ນ, ໄຖ່ຖອນໃຫ້ທະນາຄານພົງສະຫວັນ 10 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ 20 ຕື້ກີບ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈໍານວນ 246 ຕື້ກີບ;

– ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.827 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທຫກ ໂດຍກົງ 154 ຕື້ກີບ ແລະ 65 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.678 ຕື້ກີບ, ບ້ວງລະດົມທຶນຈາກ ທຫກ ປະມູນຜ່ານ ທຫລ 2.995 ຕື້ກີບ);

– ສໍາລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 12/2017 ມີການໄຖ່ຖອນໃຫ້ທະນາຄານອຸດສະຫະກໍາ ແລະ ການຄ້າ ສປ ຈີນ ຈໍານວນ 10 ລ້ານໂດລາ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນ ທັງໝົດ 394 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 1.005,09 ຈຸດ ຫຼຸດລົງ 1,57% ເມື່ອທຽບໃສ່ເດືອນຜ່ານມາ ແລະ ຫຼຸດລົງ 0,93% ເມື່ອທຽບໃສ່ດັດຊະນີທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 562.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,65 ຕື້ກີບ ຫຼຸດລົງ 26,42% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 40,21% ຂອງມູນຄ່າການຊື້-ຂາຍທັງໝົດ;

- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.499 ກີບ/ຮຸ້ນ ເພີ່ມຂຶ້ນ 268 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 183.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,01 ຕື້ກວ່າກີບ ຫຼຸດລົງ 15,85% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 26,68% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ;

- ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.709 ກີບ/ຮຸ້ນ ຫຼຸດລົງ 202 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 333.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1.57 ຕື້ກວ່າກີບ ຫຼຸດລົງ 31.85% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 45.48% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ;

- ຮຸ້ນຂອງບໍລິສັດລາວເວິນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 5.450 ກີບ/ຮຸ້ນ ຫຼຸດລົງ 1.383 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1.09 ລ້ານກວ່າກີບ ຫຼຸດລົງ 92.40% ເມື່ອທຽບໃສ່ເດືອນຜ່ານມາ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ;

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.105 ກີບ/ຮຸ້ນ ເພີ່ມຂຶ້ນ 104 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 3.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 7,79 ລ້ານກີບ ຫຼຸດລົງ 81.38% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ;

- ຮຸ້ນຂອງບໍລິສັດ ສູວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ ບໍ່ມີການປ່ຽນແປງເມື່ອທຽບໃສ່ເດືອນຜ່ານມາ ຄື 2.950 ກີບ/ຮຸ້ນ, ພ້ອມທັງມີປະລິມານຊື້-ຂາຍທັງໝົດ ແລະ ມີມູນຄ່າການຊື້-ຂາຍ ບໍ່ມີການປ່ຽນແປງເຊັ່ນດຽວກັນ ເມື່ອທຽບໃສ່ເດືອນຜ່ານມາ ຢູ່ໃນລະດັບເກົ່າຄື 100 ຮຸ້ນ ແລະ 295.000 ກີບ ຕາມລຳດັບ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດສະເລ່ຍ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ;

- ຮຸ້ນຂອງບໍລິສັດ ພູສີກໍ່ສ້າງ ມະຫາຊົນ (PCD) ຊຶ່ງເລີ່ມມີການຊື້-ຂາຍທຳອິດໃນວັນທີ 10 ຕຸລາ 2017 ມີລາຄາຊື້-ຂາຍສະເລ່ຍ 1.631 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 41.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 67.02 ລ້ານກີບ ເພີ່ມຂຶ້ນ 35.23% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດສະເລ່ຍ ກວມເອົາ 14.18% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PCD ທັງໝົດ.

## 6. ວຽກງານອື່ນໆ

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດ ນຳເງິນເຂົ້າ ສປປ ລາວ ຈຳນວນ 130.16 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 33% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 119,8 ລ້ານໂດລາສະຫະລັດ ກວມເອົາ 92% ຂອງເງິນທັງໝົດ, ເງິນບາດ 308 ລ້ານບາດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 229,71 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 29% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 157,4 ລ້ານໂດລາສະຫະລັດ ກວມເອົາ 69% ຂອງເງິນທັງໝົດ, ເງິນບາດ 2,19 ຕື້ບາດ, 14.770 ເອີໂຣ, 6.848 ຝຣັ່ງສະວິດ, 4.285 ປອນສະເຕີລິງ, 14.1 ລ້ານເຢັນ, 6.215 ໂດລາແຄນນາດາ, 29.045 ໂດລາອົດສະຕາລີ, 3.950 ໂດລານິວຊີແລນ, 13 ລິງກິດມາເລເຊຍ ແລະ 15 ຕື້ດົງ;

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການອອກໃບອະນຸຍາດສ້າງຕັ້ງຊົ່ວຄາວ ໃຫ້ທະນາຄານການຄ້າຕ່າງປະເທດຫວຽດນາມ ປະຈຳລາວ ຈຳກັດ ແລະ ໃບອະນຸຍາດສ້າງຕັ້ງທະນາຄານເອຊີລີດາ ລາວ ຈຳກັດ ສາຂາດອນໜູນ; ສຳເລັດການລົງກວດກາການຊື້-ຂາຍເງິນຕາຕ່າງປະເທດຂອງທະນາຄານທຸລະກິດ 3 ແຫ່ງ ຄື: ທະນາຄານກຸງໄທ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ, ທະນາຄານ ທະຫານໄທ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ ແລະ ທະນາຄານໄທພານິດ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ; ສຳເລັດການອອກໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ 04 ແຫ່ງຄື: ສກຈບ ອຸດົມຊັບ, ສກຈບ ຊີແອວເຄ, ສກຈບ ໂຊກໄຊຊະນະ ແລະ ສກຈບ ຄຳພູວົງຊັບ;

– ສຳເລັດການອອກຂໍ້ຕົກລົງຕ່າງໆຄື: ຂໍ້ຕົກລົງວ່າດ້ວຍອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ; ຂໍ້ຕົກລົງວ່າດ້ວຍການກຳນົດສ່ວນຕ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ສະເລັ່ຍຖ່ວງນ້ຳໜັກສະກຸນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການເກັບຄ່າທຳນຽມຕາມຄວາມສ່ຽງສິນເຊື່ອຂອງທະນາຄານທຸລະກິດ;

– ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດຈຳນວນ 09 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 677 ສະບັບ.

## ພາກທີ II
## ວຽກງານຈຸດສຸມໃນເດືອນຕໍ່ໄປ

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍລະບົບການໂອນເງິນມູນຄ່າຍ່ອຍ; ຂໍ້ຕົກລົງວ່າດ້ວຍການປະຕິບັດຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວຢູ່ທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານ; ຂໍ້ຕົກລົງວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ (ສະບັບປັບປຸງ); ຂໍ້ຕົກລົງວ່າດ້ວຍການກວດສອບພາຍນອກ; ຂໍ້ຕົກລົງວ່າດ້ວຍການກູ້ຢືມເງິນຈາກຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້; ຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ; ຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນທາງດ້ານຫຼັກການ; ຂໍ້ຕົກລົງວ່າດ້ວຍຕົວແທນຂຶ້ນທະບຽນຮຸ້ນກູ້. ພ້ອມກັນນັ້ນ, ກໍ່ໄດ້ສຸມໃສ່ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ; ກົດໝາຍວ່າດ້ວຍຫຼັກຊັບ ແລະ ກົດໝາຍວ່າດ້ວຍທະນາຄານທຸລະກິດ;

– ສືບຕໍ່ມອບ-ຮັບເອກະສານແຈ້ງຊັບສິນ ແລະ ລາຍຮັບຂອງບັນດາກົມ ແລະ ທຽບເທົ່າກົມ ທີ່ຂຶ້ນກັບ ທຫລ ທີ່ຢູ່ສູນກາງ;

– ສືບຕໍ່ກະກຽມຮອບດ້ານສຳລັບການສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ສສປ ລາວ ຄົບຮອບ 50 ປີ;

– ກະກຽມວຽກງານການຕິດຕາມກວດກາການກໍ່ສ້າງໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ ປະຈຳປີ 2017;

– ກະກຽມຈັດກອງປະຊຸມພົບປະທະນາຄານທຸລະກິດ ປະຈຳປີ 2017;

– ກະກຽມຈັດກອງປະຊຸມເຜີຍແຜ່ແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານຕາມມາດຕະຖານບາເຊວແຕ່ປີ 2017-2025;

- ກະກຽມຈັດກອງປະຊຸມກ່ຽວກັບການຜ່ານແຜນຈັດຕັ້ງປະຕິບັດການເຂົ້າເຖິງການບໍລິການທາງດ້ານການເງິນ ສໍາລັບ ສປປ ລາວ ປີ 2016-2020;
- ຄະນະສະເພາະກິດແກ້ໄຂບັນຫາບໍລິສັດ ພີເອັສ ສົ່ງເສີມກະສິກໍາ ແລະ ອຸດສາຫະກໍາຄົບວົງຈອນຂາອອກ-ຂາເຂົ້າ ຍັງສືບຕໍ່ຕິດຕາມການແກ້ໄຂສະພາບບໍລິສັດດັ່ງກ່າວຢ່າງຕໍ່ເນື່ອງ;
- ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສໍານັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ດຣ ສິມພາວ ໄຟສິດ

ສົ່ງ:
- ຄະນະຜູ້ວ່າການ ທຫລ
- ຜູ້ຊ່ວຍຄະນະຜູ້ວ່າການ ທຫລ.
- ຫ້ອງວ່າການ ສູນກາງພັກ
- ກົມຄົ້ນຄວ້າສັງລວມ, ສໍານັກງານປະທານປະເທດ
- ກົມຄົ້ນຄວ້າ-ສັງລວມ, ຫສນຍ
- ຫ້ອງການກະຊວງແຜນການ ແລະ ການລົງທຶນ.
- ຫ້ອງການກະຊວງການເງິນ
- ຄະນະກໍາມະທິການແຜນການ ການເງິນ ແລະ ການກວດສອບ ສະພາແຫ່ງຊາດ.
- ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ.
- ຄະນະຫ້ອງການ ທຫລ.
- ສໍາເນົາ.